ປະທານປະເທດ

ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ນະຄອນຫຼວງວຽງຈັນ, ວັນທີ 26 ມັງກອນ 2024

ພະນະທ່ານ,

ໃນນາມ ປະຊາຊົນລາວ ທຸກຖ້ວນໜ້າ ແລະ ໃນນາມສ່ວນຕົວ, ຂ້າພະເຈົ້າ ມີຄວາມປິຕິຍິນດີເປັນຢ່າງຍິ່ງ ສົ່ງຄຳຊົມເຊີຍອັນອົບອຸ່ນ ແລະ ພອນໄຊອັນປະເສີດ ມາຍັງ ພະນະທ່ານ ແລະ ປະຊາຊົນອິດສະຕຣາລີ ເພື່ອນມິດ ເນື່ອງໃນໂອກາດວັນຊາດ ອົດສະຕຣາລີ ຄົບຮອບ 236 ປີ.

ຂ້າພະເຈົ້າ ມີຄວາມພາກພູມໃຈເປັນຢ່າງຍິ່ງທີ່ເຫັນວ່າ ຕະຫຼອດໄລຍະ 7 ທົດສະວັດ ຜ່ານມາ, ສາຍພົວພັນມິດຕະພາບ ແລະ ການຮ່ວມມືອັນດີງາມ ລະຫວ່າງ ສປປ ລາວ ແລະ ອົດສະຕຣາລີ ເປັນໜຶ່ງໃນສາຍພົວພັນມິດຕະພາບ ທີ່ມີການພັດທະນາຢ່າງຕໍ່ເນື່ອງ, ຍາວນານ ແລະ ນັບມື້ນັບກ້າວເຂົ້າສູ່ລວງເລິກໃນຫຼາຍຂົງເຂດວຽກງານ, ໂດຍສະເພາະຂົງເຂດການເມືອງ, ເສດຖະກິດ, ການພັດທະນາຊັບພະຍາກອນມະນຸດ, ການແລກປ່ຽນຢ້ຽມຢາມ ລະຫວ່າງ ຄະນະຜູ້ແທນຂັ້ນສູງ ກໍ່ຄື ການໄປມາຫາສູ່ລະຫວ່າງປະຊາຊົນສອງຊາດ, ຊຶ່ງໄດ້ສະທ້ອນເຖິງຄວາມໄວ້ເນື້ອເຊື່ອໃຈ ແລະ ເຂົ້າອົກເຂົ້າໃຈເຊິ່ງກັນ ແລະ ກັນໃນລະດັບສູງ.

ຂ້າພະເຈົ້າ ຂໍສະແດງຄວາມຊົມເຊີຍຢ່າງຈິງໃຈ ຕໍ່ ອົດສະຕຣາລີ ທີ່ຈະໄດ້ເປັນເຈົ້າພາບຈັດງານສະເຫຼີມສະຫຼອງ ສາຍພົວພັນ ອາຊຽນ-ອົດສະຕຣາລີ ຄົບຮອບ 50 ປີ ໃນເດືອນ ມີນາ 2024 ທີ່ຈະມາເຖິງນີ້, ຊຶ່ງ ສປປ ລາວ ພວກຂ້າພະເຈົ້າຈະໄດ້ເຂົ້າຮ່ວມໃນຖານະເປັນປະທານຮ່ວມກັບອົດສະຕຣາລີ. ພ້ອມກັນນີ້, ຍັງຈະເປັນໂອກາດດີ ທີ່ສອງຝ່າຍຈະໄດ້ຮ່ວມກັນລົງນາມຖະແຫຼງການຮ່ວມ ແລະ ແຜນປະຕິບັດງານ ວ່າດ້ວຍການຍົກລະດັບເປັນຄູ່ຮ່ວມມືຮອບດ້ານ ລະຫວ່າງ ສປປ ລາວ ແລະ ອົດສະຕຣາລີ, ເຊິ່ງຈະເປັນຂີດໝາຍໃໝ່ທີ່ສຳຄັນໃນປະຫວັດສາດ ແຫ່ງການພົວພັນ ລະຫວ່າງ ສອງປະເທດພວກເຮົາ.

ໃນໂອກາດອັນສະຫງ່າລາສີນີ້, ຂ້າພະເຈົ້າ ຂໍອວຍພອນໃຫ້ ພະນະທ່ານ ຈົ່ງມີສຸຂະພາບເຂັ້ມແຂງ, ມີຄວາມຜາສຸກ ແລະ ປະສົບຜົນສຳເລັດໃນໜ້າທີ່ອັນມີກຽດສູງສົ່ງຂອງຕົນ ແລະ ປະຊາຊົນ ອົດສະຕຣາລີ ເພື່ອນມິດ ຈົ່ງສືບຕໍ່ມີຄວາມກ້າວໜ້າ ແລະ ວັດທະນະຖາວອນ.

ດ້ວຍຄວາມນັບຖືຢ່າງສູງ.

ທອງລຸນ ສີສຸລິດ

ພະນະທ່ານ ເດວິດ ເຮີເລ

ຜູ້ສຳເລັດຣາຊະການ ແຫ່ງ ເຄືອຈັກກະພົບ ອົດສະຕຣາລີ

ທີ່ ແຄນເບີຣາ